ພະຍາກອນ ອຽງຈັນ
20–26°C
ວັນພຸດ 11/11 · ເມກບາງສ່ວນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນພຸດ 11 ພະຈິກ 2026 · ສະບັບທີ 019 | ສະຫຼຸບຂ່າວປະຈຳວັນອັງຄານ 10 ພະຈິກ 2026 · 24 ຂ່າວ | 23 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວພາຍໃນ** · 10:30 ໂມງ · ອ່ານ 27 ຄັ້ງ

ຖືກຈັບແລ້ວຊາຍໜຸ່ມ 19 ປີ ຂັບລົດຈັກຕຳຄົນເສຍຊີວິດແລ້ວຫຼົບໜີ




ເຈົ້າໜ້າທີ່ຈັບຊາຍໜຸ່ມຂັບລົດຈັກຕຳຄົນເສຍຊີວິດຢູ່ບ້ານໃໝ່ເມືອງບຸນເໜືອ ແຂວງຜົ້ງສາລີ ເມື່ອມໍ່ໆ ມານີ້ ພາຍຫຼັງຜູ້ກ່ຽວຕຳແລ້ວເອົາຕົວຫຼົບໜີ ຫຼື ຕຳແລ້ວໜີ. ຜູ້ກໍ່ເຫດຊື່ທ້າວ ແມ້ນ ອາຍຸ 19 ປີ ຊົນເຜົ່າ ອາ ຄາ ອາຊີບ ປະຊາຊົນ ຢູ່ບ້ານ ສົນຈ້າຍ ເມືອງຜົ້ງສາລີ ແຂວງຜົ້ງສາລີ.

ຕາມການລາຍງານຂອງເຈົ້າໜ້າທີ່ຈະລາຈອນ ປກສ ແຂວງຜົ້ງສາລີໃຫ້ຮູ້ວ່າ: ວັນທີ 14 ຕຸລາ 2026 ນີ້, ໄດ້ມີອຸບັດຕິເຫດ ລົດຈັກ (ຕ້າໂມໂທ) ຕຳກັບ ລົດຈັກ ຢູ່ທາງຂຶ້ນກອງບັນຊາການ ປກສ ເມືອງ ບ້ານ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 16:37 ໂມງ

ຈັບນັກຮຽນ 4 ຄົນ ໃຊ້ແວ່ນຕາ AI ໂກງຂໍ້ສອບ ຄູຈັບພິລຸດໄດ້ ສັ່ງປັບຕົກທັງໝົດ



ວັນທີ 9 ພະຈິກ 2026,ກະຊວງສຶກສາທິການເກົາຫຼີໃຕ້ ເປີດເຜີຍຜົນການສອບສວນກໍລະນີນັກຮຽນໃຊ້ແວ່ນຕາອັດສະລິຍະທີ່ຕິດຕັ້ງລະບົບປັນຍາປະດິດ (AI) ທຸຈະລິດການສອບເສັງພາຍໃນໂຮງຮຽນ.

ການກວດສອບກວມເອົາໂຮງຮຽນມັດທະຍົມຕົ້ນ ແລະ ມັດທະຍົມປາຍທົ່ວປະເທດ 5,679 ແຫ່ງ ລະຫວ່າງ ວັນທີ 27 ຕຸລາ – 3 ພະຈິກ 2026. ພົບການທຸຈະລິດ ທັງໝົດ 4 ກໍລະນີ ເປັນນັກຮຽນມັດທະຍົມຕົ້ນ 1 ຄົນ ແລະ ມັດທະຍົມປາຍ 3 ຄົນ ໂດຍຢູ່ໃນກຸງໂຊລ 2 ກໍລະນີ, ແຂວງ ຊໍລລາເໜືອ 1 ກໍລະນີ ແລະ ເກາະເຊຈູ 1 ກໍລະນີ.

ເຫດການ 3 ກໍລະນີເກີດຂຶ້ນໃນລະຫວ່າງການ ສອບເສັງປາຍສິກຮຽນ ພາກຮຽນທີ 1 ສ່ວນອີກໜຶ່ງກໍລະນີ

ຕໍ່ໜ້າ 2

ໃນສະບັບນີ້


2 ຂ່າວພາຍໃນ
7 ເສດຖະກິດ-ສັງຄົມ
8 ເຫດການ
9 ໄລຟ໌ສະໄຕລ໌
10 ຂ່າວຕ່າງປະເທດ
22 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
23 ທ້າຍສະບັບ



◆ **ຂ່າວຕ່າງປະເທດ** · 14:45 ໂມງ

ເຫດການສະຫຼົດໃຈ! ພົບຮ່າງເດັກຍິງເຊື້ອຊາດຫວຽດນາມ ອາ...

ອ່ານໜ້າ 10 ▸



◆ **ຂ່າວຕ່າງປະເທດ** · 11:42 ໂມງ

ແຄ້ນເງິນຊົດເຊີຍ! ຊາຍຈີນຂັບລົດຈັກບຸກພັງ ສູນລາຊະການ ສ່ານຊີ

ອ່ານໜ້າ 10 ▸



◆ **ຂ່າວພາຍໃນ** · 10:50 ໂມງ

ຄະນະກວດກາສູນກາງ ພັກ ລົງປະເມີນ ວຽກງານກົງຈັກກາ...

ອ່ານໜ້າ 2 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ຖືກຈັບແລ້ວຊາຍໜຸ່ມ 19 ປີ ຂັບລົດຈັກຕຳຄົນເສຍຊີວິດແລ້ວຫຼົບ... (ຕໍ່ຈາກໜ້າ 1)

ໃໝ່ ເມືອງບຸນເໜືອ ແຂວງຜົ້ງສາລີ ເຮັດໃຫ້ມີຜູ້ເສຍຊີວິດ 01 ຄົນແຕ່ຄູ່ກໍລະນີຕຳແລ້ວໜີ.

ຈາກນັ້ນ, ເຈົ້າໜ້າທີ່ພະແນກຕຳຫຼວດຈະລາຈອນ ສືບຕໍ່ລົງເກັບກຳຂໍ້ມູນ ເອົາຄຳໃຫ້ການຈາກບັນດາພະຍານຜູ້ທີ່ຮູ້ເຫັນເຫດການ, ຫຼັງຈາກນັ້ນເຈົ້າໜ້າທີ່ຕຳຫຼວດພະແນກຕຳຫຼວດຈະລາຈອນ ປກສ ແຂວງຜົ້ງສາລີ ກໍ່ໄດ້ປະສານສົມທົບກັບ ພະແນກສຶບສອນ-ສອບສວນ ລົງຕິດຕາມຢູ່ ຂອບເຂດ ເມືອງບຸນເໜືອ ແລະ ເມືອງຜົ້ງສາລີ.

ຕິກມາຮອດວັນທີ 6 ພະຈິກ 2026 ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ຈຶ່ງສາມາດກັກຕົວເປົ້າໝາຍຜູ້ຂັບຂີ່ລົດຈັກ (ຕ້າໂມໂທ) ຊື່ທ້າວ ແມ້ນາ, ອາຍຸ 19 ປີ, ຊົນເຜົ່າ ອາຄາ, ອາຊີບ ປະຊາຊົນ, ຢູ່ບ້ານ ສົນຈ້າຍ, ເມືອງຜົ້ງສາລີ, ແຂວງຜົ້ງສາລີ ມາ ທຳການສືບສວນ-ສອບສວນ ເພື່ອຊອກສາເຫດໃນການເກີດອຸປະຕິເຫດຄັ້ງນີ້.

ຜ່ານການສືບສວນ-ສອບສວນ ຜູ້ກ່ຽວໄດ້ຮັບສາລະພາບວ່າຕົນເປັນຜູ້ກໍ່ເຫດ ຕຳແລ້ວເອົາຕົວຫຼົບໜີແທ້. ປະຈຸບັນຜູ້ກ່ຽວຖືກກັກຕົວໄວ້ຢູ່ທີ່ກັກຂັງຊົ່ວຄາວ ຫ້ອງຕຳຫຼວດ. ສ່ວນຄະດີດັ່ງກ່າວ, ທາງເຈົ້າໜ້າທີ່ກຳລັງສືບຕໍ່ດຳເນີນຕາມຫຼັກການ ວິຊາສະເພາະ ແລະ ຂັ້ນຕອນຂອງ ກົດໝາຍ.

ທີ່ມາ: ໂຄສະນາອິບຣິມ-ຂ່າວສານ ປກສ ແຂວງຜົ້ງສາລີ

ຈັບນັກຮຽນ 4 ຄົນ ໃຊ້ແວ່ນຕາ AI ໂກງຂໍ້ສອບ ຄູຈັບພິລຸດໄດ້ ສັ່ງ... (ຕໍ່ຈາກໜ້າ 1)

ເກີດຂຶ້ນລະຫວ່າງການສອບເສັງກາງພາກຮຽນທີ 2.

ນັກຮຽນ 3 ຄົນຖືກຈັບໄດ້ຫຼັງຈາກຄູຄຸມສອບສັງເກດເຫັນພຶດຕິກຳຜິດປົກກະຕິ ໂດຍນັກຮຽນໄດ້ໃຊ້ມືສຳຜັດກອບແວ່ນຕາຊ້ຳໆ ລະຫວ່າງເຮັດບົດສອບເສັງ.

ໜຶ່ງໃນກໍລະນີທີ່ແຂວງຊໍລລາເໜືອ, ຄູສັງເກດເຫັນແສງສີຂຽວອອກມາຈາກແວ່ນຕາຂອງນັກຮຽນ ຈຶ່ງໄດ້ກວດສອບ ແລະ ພົບວ່າເປັນແວ່ນຕາອັດສະລິຍະ. ສ່ວນກໍລະນີໃນກຸງໂຊລ, ມີນັກຮຽນທີ່ປົກກະຕິບໍ່ໄດ້ສອມແວ່ນຕາກັບສອມແວ່ນຕາເຂົ້າຫ້ອງສອບ, ເຮັດໃຫ້ຄູເກີດຄວາມສົງໄສ. ສຳລັບທີ່ເກາະເຊຈູ, ນັກຮຽນລາຍໜຶ່ງແອບປ່ຽນຈາກແວ່ນຕາທຳມະດາເປັນແວ່ນຕາ AI ຫຼັງຈາກເລີ່ມສອບເສັງ, ແຕ່ຄຸຄຸມສອບໄດ້ຮັບເບາะແສຈາກເພື່ອນນັກຮຽນ ແລະ ຄອຍເຝົ້າສັງເກດການຢູ່ກ່ອນແລ້ວ.

ກະຊວງສຶກສາທິການລະບຸວ່າ ຄວາມຄຸ້ນເຄີຍລະຫວ່າງຄູກັບນັກຮຽນ ຊ່ວຍໃຫ້ສາມາດສັງເກດເຫັນພຶດຕິກຳຜິດປົກກະຕິໄດ້ງ່າຍກວ່າການສອບເສັງລະດັບປະເທດ.

ໂຮງຮຽນທັງ 4 ແຫ່ງໄດ້ສັ່ງໃຫ້ຄະແນນສອບເສັງໃນວິຊາທີ່ພົບການທຸຈະລິດເປັນສູນທັງໝົດ ຕາມລະບຽບການປະເມີນຜົນການສຶກສາ. ນັກຮຽນມັດທະຍົມປາຍ 3 ຄົນ ໄດ້ຮັບໂທດເພີ່ມເຕີມແຕກຕ່າງກັນໄປ ຄື: ພັກການຮຽນ 5 ວັນ, ເຂົ້າຮັບການອົບຮົມພິເສດ 3 ວັນ ແລະ ບຳເພັນປະໂຫຍດ 4 ຊົ່ວໂມງ. ສ່ວນນັກຮຽນມັດທະຍົມຕົ້ນບໍ່ໄດ້ຮັບໂທດທາງວິໄນຢ່າງເປັນທາງການ, ແຕ່ທາງໂຮງຮຽນໄດ້ແນະນຳໃຫ້ເຮັດກິດຈະກຳບຳເພັນປະໂຫຍດພາຍໃນສະຖານບັນການສຶກສາ.

ກະຊວງສຶກສາທິການກຽມສົ່ງຄູ່ມືປ້ອງກັນການໃຊ້ແວ່ນຕາ AI ທຸຈະລິດການສອບເສັງໃຫ້ໂຮງຮຽນທົ່ວປະເທດ ພ້ອມທັງເພີ່ມມາດຕະການກວດສອບອຸປະກອນອີເລັກໂທຣນິກ.

ສຳລັບການສອບເສັງເຂົ້າມະຫາວິທະຍາໄລທົ່ວປະເທດໃນວັນທີ 19 ພະຈິກ 2026, ທາງການໄດ້ປະກາດຫ້າມນຳແວ່ນຕາອັດສະລິຍະເຂົ້າຫ້ອງສອບໂດຍເດັດຂາດ. ຜູ້ທີ່ໃຊ້ແວ່ນຕາ AI ທຸຈະລິດການສອບເສັງອາດຈະຖືກດຳເນີນຄະດີຕາມກົດໝາຍອາຍາ ແລະ ທາງການມີແຜນທີ່ຈະເພີ່ມໄລຍະເວລາຫ້າມເຂົ້າສອບເສັງຈາກ 1 ປີ ເປັນ 3 ປີ.

ກະຊວງສຶກສາທິການຢືນຢັນວ່າ ຈະຍົກລະດັບການກວດສອບ ເພື່ອປ້ອງກັນການນຳເຕັກໂນໂລຊີ AI ມາໃຊ້ໃນການທຸຈະລິດ ແລະ ຮັກສາຄວາມຍຸຕິທຳຂອງລະບົບການສຶກສາ.

ທີ່ມາ: Korea JoongAng Daily

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 10:50 ໂມງ · ອ່ານ 16 ຄັ້ງ

ຄະນະກວດກາສູນກາງພັກ ລົງປະເມີນວຽກງານກົງຈັກການຈັດຕັ້ງ ແລະ ຕຳແໜ່ງງານ ຢູ່ເຊກອງ



ໃນຕົ້ນເດືອນ ຕຸລາ 2026 ກົມຈັດຕັ້ງ-ພະນັກງານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ນຳພາໂດຍ ສະຫາຍ ນາງ ເກດມະນີ ຈຸນລະມະນີ ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພ້ອມດ້ວຍທີມງານ ໄດ້ລົງຕິດຕາມ, ຊຸກຍູ້ ວຽກປະເມີນຜົນການຈັດຕັ້ງປະຕິບັດນິຕິກຳຕ່າງໆ ກ່ຽວກັບວຽກງານປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ການກຳນົດຕຳແໜ່ງງານ ທີ່ຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງ ແຂວງເຊກອງ ໃຫ້ກຽດຕ້ອນຮັບໂດຍ ສະຫາຍ ປອ ສາກົນ ພອນປະເສີດ ກຳມະການປະຈຳພັກແຂວງ, ປະທານຄະນະກວດກາພັກ, ປະທານອົງການກວດກາລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງແຂວງເຊກອງ, ມີບັນດາສະຫາຍ ຮອງຫົວໜ້າຄະນະຈັດຕັ້ງແຂວງ, ຮອງປະທານຄະນະກວດກາພັກ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພ້ອມດ້ວຍພະນັກງານ-ລັດຖະກອນ ພາຍໃນຄະນະກວດກາແຂວງເຊກອງ ເຂົ້າຮ່ວມທັງໝົດ: 18 ສະຫາຍ, ຍິງ 6 ສະຫາຍ.

ໃນໂອກາດນີ້ ສະຫາຍ ຊົມ ສະຫວັນ ຊຸມພົນພັກດີ ຮອງປະທານ ຄະນະກວດກາພັກ, ອົງການກວດກາລັດ ແລະ ຮອງຫົວໜ້າອົງການຕ້ານການສໍ້ລາດ ບັງຫຼວງແຂວງເຊກອງ ໄດ້ລາຍງານຫຍໍ້ ກ່ຽວກັບສະພາບການຈັດຕັ້ງປະຕິບັດນິຕິກຳຕ່າງໆ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ການກຳນົດຕຳແໜ່ງງານ ພາຍໃນຄະນະກວດກາພັກ, ອົງການກວດກາລັດແຂວງເຊກອງ ລວມທັງບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຕ່າງໆ. ຈາກນັ້ນ, ຜູ້ເຂົ້າຮ່ວມຈາກສູນກາງ ແລະ ແຂວງ ໄດ້ຮ່ວມກັນແລກປ່ຽນຄຳຄິດເຫັນ, ບົດຮຽນ ແລະ ປະສົບການ ກ່ຽວກັບການຈັດຕັ້ງປະຕິບັດນິຕິກຳຕ່າງໆ ໂດຍສຸມໃສ່ບັນດາວຽກງານສຳຄັນທີ່ຕ້ອງສືບຕໍ່ປັບປຸງ, ແກ້ໄຂ ແລະ ຍົກສູງປະສິດທິພາບໃນການເຄື່ອນໄຫວຈັດຕັ້ງປະຕິບັດນິຕິກຳຕ່າງໆ ກ່ຽວກັບວຽກງານປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ການກຳນົດຕຳແໜ່ງງານ ຂອງຄະນະກວດກາພັກ, ອົງການກວດກາລັດພາຍໃນແຂວງເຊກອງ ເປັນຕົ້ນ: ຄຳແນະນຳ ເລກທີ 379/ຄກສພ ລົງວັນທີ 7 ພະຈິກ 2023, ຂໍ້ຕົກລົງເລກທີ 391/ອກຫລ ລົງວັນທີ 7 ພະຈິກ 2023, ຂໍ້ຕົກລົງເລກທີ 392/ອກຫລ ລົງວັນທີ 7 ພະຈິກ 2023, ຄຳແນະນຳເລກທີ 504/ຄກສພ ລົງວັນທີ 15 ພະຈິກ 2024, ແຈ້ງການແນະນຳ ເລກທີ 47/ຄກສພ ລົງວັນທີ 14 ກຸມພາ 2025 ແລະ ແຈ້ງການແນະນຳ ເລກທີ 155/ຄກສພ ລົງວັນທີ 23 ເມສາ 2025 ແລະ ນິຕິກຳອື່ນໆ ກ່ຽວກັບວຽກງານກວດກາ. ຈາກນັ້ນ, ທີມງານຈາກສູນກາງ ໄດ້ແນະນຳ ແລະ ນຳພາປັບປຸງພາລະບົດບາດ ຂອງຄະນະກວດກາພັກແຂວງ, ພາລະບົດບາດ ຂອງອົງການກວດກາລັດແຂວງ ແລະ ນຳພາການຂຽນຕຳແໜ່ງງານ ຂອງປະທານ, ຮອງປະທານ ແລະ ບັນດາຂະແໜງການທີ່ຂຶ້ນກັບ. ເພື່ອເປັນບ່ອນອີງ ແລະ ມີຄວາມສະດວກ, ສອດຄອງກັບນິຕິກຳ ແລະ ສະພາບການເຄື່ອນໄຫວວຽກງານຕົວຈິງພາຍໃນຄະນະກວດກາແຂວງເຊກອງ.

ການລົງເຄື່ອນໄຫວຄັ້ງນີ້ ເປັນໂອກາດສຳຄັນໃຫ້ແກ່ໜ່ວຍງານຈາກຄະນະກວດກາສູນກາງ ໃນການກຳແໜ້ນສະພາບການເຄື່ອນໄຫວຕົວຈິງ, ການຕີລາຄາປະເມີນຄືນບັນດານິຕິກຳຕ່າງໆ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ການກຳນົດຕຳແໜ່ງງານ ໂດຍສະເພາະມີການແລກປ່ຽນບົດຮຽນຈາກພຶດຕິກຳຕົວຈິງ ແລະ ພ້ອມກັນຊອກຫາແນວທາງແກ້ໄຂບັນດາຂໍ້ຫຍຸ້ງຍາກ ເພື່ອນຳເອົາຂໍ້ມູນດັ່ງກ່າວນີ້ໄປປັບປຸງນິຕິກຳຕ່າງໆ ໃຫ້ມີຄວາມຖືກຕ້ອງຕາມລະບຽບ, ກົດໝາຍອາຍອອກ ແລະ ຖືກກັບສະພາບຄວາມເປັນຈິງນັບແຕ່ສູນກາງລົງຮອດທ້ອງຖິ່ນ.

ທີ່ມາ: ອາລະສານກວດກາ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 22 ໃນສະບັບນີ້

ຂ່າວພາຍໃນ · 16:18 ໂມງ · ອ່ານ 10 ຄັ້ງ

ເປີດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ເນັ້ນ ພິຈາລະນາແຜນພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຕໍ່ເນື່ອງ



ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ໄດ້ໄຂຂຶ້ນໃນວັນທີ 10 ພະຈິກ 2026 ທີ່ຫ້ອງວ່າການນະຄອນຫຼວງວຽງຈັນ (ນວ) ໂດຍມີທ່ານ ປອ. ອາດສະພັງທອງ ສີພັນດອນ ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ເປັນປະທານ. ໃຫ້ກຽດເຂົ້າຮ່ວມມີທ່ານ ສີລິລາດ ທິງສິນ ທອງເພັງ ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ, ບັນດາທ່ານການນຳພັກ-ລັດຂອງນະຄອນຫຼວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V, ພ້ອມດ້ວຍປະທານ ແລະ ຮອງປະທານຄະນະກຳມະການປົກຄອງເມືອງ, ຫົວໜ້າ ແລະ ຮອງຫົວໜ້າພະແນກການ ຕະຫຼອດຮອດຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດທີ່ກ່ຽວຂ້ອງ.

ທ່ານ ປອ. ອາດສະພັງທອງ ສີພັນດອນ ໄດ້ກ່າວວ່າ ກອງປະຊຸມຄັ້ງນີ້ຈະດຳເນີນໄປເປັນເວລາ 4 ວັນ ແຕ່ວັນທີ 10-13 ພະຈິກ 2026 ໂດຍຈະສຸມໃສ່ການພິຈາລະນາ, ປຶກສາຫາລື ແລະ ຮັບຮອງເອົາບັນດາບັນຫາສຳຄັນພື້ນຖານຂອງນະຄອນຫຼວງ ເພື່ອຊຸກຍູ້ການພັດທະນາໃຫ້ມີຄວາມກ້າວໜ້າ ແລະ ແກ້ໄຂບັນຫາທີ່ຍັງຄົງຄ້າງໃຫ້ເກີດຜົນເປັນຮູບປະທຳ.

ສຳລັບເນື້ອໃນອາລະສຳຄັນ ແມ່ນການພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະກຳມະການປົກຄອງນະຄອນຫຼວງ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນໄລຍະ 9 ເດືອນ ພ້ອມທັງຄາດຄະເນຜົນການປະຕິບັດໝົດປີ 2026 ແລະ ກຳນົດທິດທາງແຜນການປະຈຳປີ 2027 ຂອງນະຄອນຫຼວງວຽງຈັນ.

ນອກນີ້ ຍັງຈະມີການຮັບຟັງລາຍງານຜົນການຈັດຕັ້ງປະຕິບັດອາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະການສ້າງແຜນປະຕິບັດງານ ແລະ ໂຄງການຕ່າງໆພາຍໃນນະຄອນຫຼວງ. ພ້ອມກັນນັ້ນ ຈະພິຈາລະນາຮັບຮອງໂຄງການສຳຫຼວດ, ອອກແບບ ແລະ ວາງແຜນຜັງເທດສະບານເມືອງນາຊາຍທອງ, ເມືອງຫາດຊາຍຟອງ ແລະ ເມືອງປາກງື່ມ.

ສ່ວນບັນຫາສຳຄັນທີ່ຈະນຳມາລາຍງານຊີ້ແຈງ ແລະ ປຶກສາຫາລື ມີ 3 ປະເດັນຫຼັກ ຄື:

ການຈັດຕັ້ງປະຕິບັດແຜນຍຸດທະສາດການບໍລິຫານຈັດການຂີ້ເຫຍື້ອ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ກຳຈັດຂີ້ເຫຍື້ອໃນນະຄອນຫຼວງວຽງຈັນ.

ການຈັດຕັ້ງປະຕິບັດຄຳສັ່ງເລກທີ 11/ຄລ ສພ ລົງວັນທີ 7 ພຶດສະພາ 2026 ວ່າດ້ວຍການເພີ່ມທະວີການຊີ້ນຳຂອງພັກຕໍ່ວຽກງານແຂ່ຫາດ, ການຄຸ້ມຄອງ ແລະ ແກ້ໄຂບັນຫາຫຍໍ້ທໍ້ໃນຂົງເຂດຊັບພະຍາກອນທຳມະຊາດ.

ສະພາບການສຶກສາ ໂດຍສຸມໃສ່ບັນຫາການປະລະການຮຽນຂອງນັກຮຽນໃນລະດັບປະຖົມ ແລະ ມັດທະຍົມ ພ້ອມທັງບັນຫາການຂາດແຄນຄູສອນ ໂດຍສະເພາະຢູ່ເຂດຊານເມືອງ ຄື ເມືອງສັງທອງ ແລະ ເມືອງປາກງື່ມ.

ພ້ອມນີ້ ກອງປະຊຸມຈະພິຈາລະນາຮັບຮອງຮ່າງນິຕິກຳຂອງນະຄອນຫຼວງ ຈຳນວນ 3 ສະບັບ ປະກອບມີ: ຮ່າງຂໍ້ຕົກລົງວ່າດ້ວຍພັນທະ ແລະ ຄວາມຮັບຜິດຊອບຂອງເຈົ້າຂອງກິດຈະການໂຮງແຮມ, ຣີສອດ, ເຮືອນພັກ, ຄອນໂດມິນຽມ, ອາພາດເມັນ, ເຮືອນໃຫ້ເຊົ່າ, ເຮືອນຫ້ອງແຖວ ແລະ ຜູ້ມາພັກເຊົ່າ; ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ພັດທະນາສະຖານທີ່ຈອດລົດໃນຕົວເມືອງ ນະຄອນຫຼວງວຽງຈັນ; ແລະ ຮ່າງຂໍ້ຕົກລົງວ່າດ້ວຍກອງທຶນຊ່ວຍເຫຼືອສຸກເສີນ.

ສຳລັບການປັບປຸງນິຕິກຳ ຈະມີການພິຈາລະນາຮ່າງຂໍ້ຕົກລົງ 2 ສະບັບ ຄື ຂໍ້ຕົກລົງວ່າດ້ວຍການປະເມີນລາຄາທີ່ດິນທົ່ວນະຄອນຫຼວງວຽງຈັນ (ສະບັບປັບປຸງ) ແລະ ຂໍ້ຕົກລົງວ່າດ້ວຍການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງນະຄອນຫຼວງວຽງຈັນ (ສະບັບປັບປຸງ).

ອີກອາລະສຳຄັນໜຶ່ງ ແມ່ນການພິຈາລະນາຮັບຮອງບົດລາຍງານຜົນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການປີ 2027 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ, ອົງການກວດສອບປະຈຳພາກກາງ 1, ອົງການກວດກາລັດນະຄອນຫຼວງ, ອົງການໄອຍະການປະຊາຊົນພາກກາງ ແລະ ນະຄອນຫຼວງ ລວມເຖິງສານປະຊາຊົນພາກກາງ ແລະ ນະຄອນຫຼວງ. ນອກຈາກນັ້ນ ຍັງຈະຮັບຟັງລາຍງານຜົນການຈັດຕັ້ງປະຕິບັດຄຳຕັດສິນຂອງສານປະຈຳປີ 2026 ແລະ ທິດທາງແຜນການປີ 2027 ຂອງກອງປະຕິບັດຄຳຕັດສິນຂອງສານປະຈຳນະຄອນຫຼວງວຽງຈັນ ພ້ອມທັງຮັບຟັງຄຳເຫັນຈາກອົງການແນວລາວສ້າງຊາດ ຕໍ່ການປະຕິບັດໜ້າທີ່ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V.

ພ້ອມກັນນີ້ ກອງປະຊຸມຍັງຈະເປັນເວທີໃຫ້ບັນດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງ ໄດ້ຍົກຄຳຊັກຖາມຕໍ່ບັນຫາຕ່າງໆ ໂດຍຈະມີຄະນະກຳມະການປົກຄອງນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງ ຂຶ້ນຊີ້ແຈງ ແລະ ຕອບຄຳຊັກຖາມ ເພື່ອສ້າງຄວາມຈະແຈ້ງ ພ້ອມຊອກຫາແນວທາງແກ້ໄຂບັນຫາທີ່ປະຊາຊົນກຳລັງປະເຊີນ.


ກອງປະຊຸມຄັ້ງນີ້ ຈຶ່ງເປັນອີກກົນໄກສຳຄັນໃນການຕິດຕາມກວດກາ, ປຶກສາຫາລື ແລະ ກຳນົດທິດທາງການພັດທະນານະຄອນຫຼວງ ໃຫ້ສອດຄ່ອງກັບສະພາບຕົວຈິງ ພ້ອມທັງເລັ່ງແກ້ໄຂບັນຫາສຳຄັນໃນຫຼາຍຂົງເຂດ ເພື່ອຍົກສູງປະສິດທິຜົນການບໍລິຫານ ແລະ ນຳຜົນປະໂຫຍດມາສູ່ປະຊາຊົນໃນນະຄອນຫຼວງຢ່າງແທ້ຈິງ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວພາຍໃນ · 09:11 ໂມງ · ອ່ານ 9 ຄັ້ງ

ລັດຖະມົນຕີກະຊວງ ປກສ ເດີນທາງໄປຢ້ຽມຢາມ, ເຮັດວຽກຢູ່ປະເທດຣັດເຊຍ



ໃນວັນທີ 9 ພະຈິກ 2026, ທີ່ສະໜາມບິນສາກົນວັດໄຕ, ໄດ້ມີພິທີສົ່ງ ພົທ ວັນທອງ ກອງມະນີ ຄະນະເລຂາທິການສູນກາງພັກ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ເພື່ອເດີນທາງໄປຢ້ຽມຢາມ, ເຮັດວຽກ ແລະ ລົງນາມບົດບັນທຶກຄວາມເຂົ້າໃຈສອງຝ່າຍ.

ໃຫ້ກຽດສົ່ງຄະນະໃນຄັ້ງນີ້, ມີ ທ່ານ ເຊຣເກ ຊົຍ ສະກີ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງສະຫະພັນຣັດເຊຍ ປະຈຳ ສປປ ລາວ. ພ້ອມດ້ວຍ ພົຕ ຄອນສະຄອນ ສົມພາໄຊ ຮອງລັດຖະມົນຕີ ກະຊວງ ປກສ ແລະ ຄະນະນຳ ເຂົ້າຮ່ວມ.

ການເດີນທາງເຂົ້າຮ່ວມກອງປະຊຸມ ໃນລະຫວ່າງ ວັນທີ 9-14 ພະຈິກ 2026 ເພື່ອເປັນການພົບປະແລກປ່ຽນບົດຮຽນ ແລະ ລົງນາມບົດບັນທຶກຄວາມເຂົ້າໃຈຂອງສອງຝ່າຍ ລະຫວ່າງ ກະຊວງປ້ອງກັນຄວາມສະຫງົບ ສປປ ລາວ ແລະ ອົງການປ້ອງກັນຄວາມສະຫງົບພາຍໃນ ແຫ່ງຊາດ ສະຫະພັນ ຣັດເຊຍ ເພື່ອເປັນບ່ອນອີງທີ່ສຳຄັນໃຫ້ແກ່ກຳລັງວິຊາສະເພາະຂອງທັງສອງຝ່າຍ ໄດ້ສືບຕໍ່ປະສານສົມທົບ ແລະ ຜັນຂະຫຍາຍເນື້ອໃນຈິດໃຈການຮ່ວມມືໃຫ້ເປັນຮູບປະທຳ ແນໃສ່ເຮັດໃຫ້ພາກພື້ນມີຄວາມສັນຕິພາບ ແລະ ມີສະຖຽນລະພາບຂອງສອງປະເທດ.

ທີ່ມາ: ຄວາມສະຫງົບ Lao Security News

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 15:36 ໂມງ · ອ່ານ 5 ຄັ້ງ

ລາວ-ຫວຽດນາມ ລົງນາມຮ່ວມມືພັດທະນາຊົນນະບົດ ໄລຍະ 2026-2030



ເມື່ອບໍ່ດົນມານີ້, ຢູ່ນະຄອນຫຼວງຮ່າໂນ້ຍ ສສ ຫວຽດນາມ, ກົມພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສປປ ລາວ ແລະ ກົມເສດ ຖະກິດຮ່ວມມື ແລະ ພັດທະນາຊົນນະບົດ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສສ ຫວຽດນາມ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືພັດທະນາຊົນນະບົດ ໄລຍະ 2026-2030 ໂດຍການຮ່ວມລົງນາມຂອງ ທ່ານ ທັດສະກາ ສະພັງທອງ ຫົວໜ້າກົມພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ທ່ານ ເລ ດຶກ ທິງ ຫົວໜ້າກົມເສດຖະກິດຮ່ວມມື ແລະ ພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສສ ຫວຽດນາມ ໂດຍມີພາກສ່ວນກ່ຽວຂ້ອງສອງຝ່າຍ ເຂົ້າຮ່ວມເປັນສັກຂີພິຍານ.

ບົດບັນທຶກຄວາມເຂົ້າໃຈສະບັບນີ້, ເປັນການສ້າງຕັ້ງການຮ່ວມມືລະຫວ່າງສອງຝ່າຍ ເພື່ອເພີ່ມທະວີແລກປ່ຽນຂໍ້ມູນຂ່າວສານ, ແບ່ງປັນປະສົບການ ແລະ ສົ່ງເສີມການຮ່ວມມືໃນບັນດາຂົງເຂດການພັດທະນາຊົນນະບົດ, ເສດຖະກິດຮ່ວມມື, ສະຫະກອນ, ການຈັດຕັ້ງການຜະລິດ, ການພັດທະນາຊີວິດການເປັນຢູ່, ການຫລຸດຜ່ອນຄວາມທຸກຍາກແບບຍືນຍົງ ສອດຄ່ອງກັບພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດອຳນາດຂອງແຕ່ລະຝ່າຍ. ຂອບການຮ່ວມມືນີ້, ສອງຝ່າຍມີຈຸດປະສົງເພີ່ມທະວີການປະສານງານ, ເຊື່ອມໂຍງກັບອົງການ, ການຈັດຕັ້ງ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງ; ສົ່ງເສີມການຈັດຕັ້ງປະຕິບັດກິດຈະກຳຕົວຈິງຮ່ວມກັນ ແລະ ມີຜົນປະໂຫຍດຮ່ວມກັນ ໃນໄລຍະ 2026-2030 ບົນພື້ນຖານຕາມກົດໝາຍຂອງແຕ່ລະປະເທດ ແລະ ຊັບພະຍາກອນທີ່ມີຢູ່ຂອງສອງຝ່າຍ.

ສຳລັບ ຂອບເຂດການຮ່ວມມືມີຄື: ພັດທະນາຊົນນະບົດ; ເສດຖະກິດຮ່ວມມື, ສະຫະກອນ; ຈັດຕັ້ງການຜະລິດ ແລະ ການເຊື່ອມໂຍງການຜະລິດຕາມເສດຖະກິດຕ່ອງໂສ້; ພັດທະນາຊີວິດການເປັນຢູ່; ແກ້ໄຂຄວາມທຸກຍາກ; ພັດທະນາ

ຕໍ່ໜ້າ 6

ລາວ-ຫວຽດນາມ ລົງນາມຮ່ວມມືພັດທະນາຊົນນະບົດ ໄລຍະ 20... (ຕໍ່ຈາກໜ້າ 5)

ຫັດຖະກຳ, ຫັດຖະກຳພື້ນບ້ານ ແລະ ຂົງເຂດຂະແໜງການທີ່ກ່ຽວຂ້ອງ. ນອກຈາກນີ້, ຍັງພັດທະນາເສດຖະກິດຮ່ວມມື ແລະ ຈັດຕັ້ງການຜະລິດແລກປ່ຽນບົດ ຮຽນ, ຊ່ວຍເຫລືອທາງດ້ານເຕັກນິກ ແລະ ການປະສານງານ, ທົດລອງບັນດາຮູບແບບກຸ່ມ, ສະຫະ ກອນ, ເຊື່ອມໂຍງການຜະລິດຕາມເສດຖະກິດຕ່ອງໂສ້, ພັດທະນາຜະລິດຕະພັນ, ຫັດຖະກຳ, ຫັດຖະ ກຳພື້ນບ້ານ ແລະ ປັບປຸງຊີວິດການເປັນຢູ່ແບບຍືນຍົງ ທີ່ແທດເໝາະກັບເງື່ອນໄຂຂອງແຕ່ລະ ປະເທດ ແລະ ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ການຍົກຍ້າຍ ຖິ່ນຖານຂອງປະຊາຊົນ ແລກ ປ່ຽນ ບົດຮຽນ ກ່ຽວກັບການພັດທະນາ ຊົນນະບົດຮອບດ້ານ, ຫລຸດຜ່ອນຄວາມ ທຸກຍາກດ້ວຍຫລາຍຮູບແບບ, ພັດທະນາ ຊີວິດການເປັນຢູ່ແບບຍືນຍົງ, ການຍົກ ຍ້າຍ, ຈັດສັນພື້ນທີ່ທີ່ຢູ່ອາໄສແບບຖາ ວອນ, ຄວາມສ່ຽງຈາກໄພພິບັດທາງ ທຳມະຊາດ ແລະ ຂົງເຂດທີ່ເໝາະສົມອື່ນ ໆ; ແລກປ່ຽນບົດຮຽນ ກ່ຽວກັບ ຮູບແບບການພັດທະນາຊົນນະບົດ, ການ ປັບປຸງຊີວິດການເປັນຢູ່ ແລະ ຫລຸດຜ່ອນ ຄວາມທຸກຍາກ ໃຫ້ແທດເໝາະກັບ ເງື່ອນໄຂຂອງແຕ່ລະປະເທດ; ພັດທະນາ ຊັບພະຍາກອນມະນຸດ ແລະ ການ ແລກປ່ຽນບົດຮຽນ ຈັດຕັ້ງບັນດາຄະນະ ຜູ້ແທນເຮັດວຽກ, ສຳຫລວດ, ຮຽນຮູ້ຈາກ ປະສົບການ, ກອງປະຊຸມ, ສຳມະນາ, ການພັດທະນາກຸ່ມ, ຝຶກອົບຮົມ, ແລກປ່ຽນຊ່ຽວຊານ ແລະ ບັນດາໂຄງການ ສຶກສາ, ການຝຶກອົບຮົມທີ່ແທດ ເໝາະ ກັບຄວາມຕ້ອງການ ແລະ ຄວາມສາມາດ ຂອງສອງຝ່າຍ; ການກໍ່ສ້າງ, ການທົດລອງ ແລະ ຂະຫຍາຍຮູບການ, ເຊື່ອມສານ ແລະ ຂົນຂວາຍບຸກຄະລາກອນປະສານ ງານ ເພື່ອກໍ່ສ້າງ, ທົດລອງ ແລະ ຂະຫຍາຍ ຄຸ້ມຄອງໄພພິບັດຂັ້ນສູນກາງ, ຂັ້ນແຂວງພາກກາງ- ພາກ ໃຕ້ເຂົ້າຮ່ວມ.

ໃນກອງປະຊຸມຄະນະຜູ້ແທນ ໄດ້ຮັບຟັງການລາຍ ງານສະພາບໄພພິບັດ, ແຜນກຽມພ້ອມຕອບໂຕ້ໄພພິບັດ ແລະ ທ່າແຮງໃນການກຽມພ້ອມຮັບມືກັບໄພພິບັດ ຂອງ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ, ຂັ້ນແຂວງ, ລາຍງານຮ່າງແນວຄວາມຄິດສ້າງສູນກຽມພ້ອມຕອບໂຕ້ ໄພພິບັດປະຈຳຢູ່ 3 ພາກ ຂອງປະເທດລາວ ໂດຍສະເພາະ ຢູ່ພາກໃຕ້ ທີ່ແຂວງຈຳປາສັກ, ລາຍງານຫຍໍ້ ສະພາບໄພພິບັດທີ່ເກີດຂຶ້ນ, ການແກ້ໄຂ ແລະ ແຜນຮັບມືກັບສະພາບແຫ້ງແລ້ງ ຢູ່ ແຂວງ ຈຳປາສັກ, ຮັບຟັງລາຍງານຈາກ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບແຜນກຽມພ້ອມຮັບມືກັບ ສະພາບແຫ້ງແລ້ງ, ການກຽມຄວາມພ້ອມ ທາງດ້ານກຳລັງພົນ, ພາຫະນະ, ອຸປະກອນ ຈາກກະຊວງປ້ອງກັນປະເທດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ. ພ້ອມທັງແລກປ່ຽນບົດຮຽນວຽກງານ ຄຸ້ມຄອງໄພພິບັດບັນດາ ແຂວງພາກກາງ-ພາກໃຕ້ ກ່ຽວກັບແຜນການກຽມພ້ອມ ຮັບມືກັບສະພາບໄພພິບັດແຫ້ງແລ້ງແອ ນິນໂຍ ແລະ ຮັບມືກັບສະພາບໃນໄລຍະ ລະດູຝົນຕໍ່ໜ້າຕື່ມອີກ.

ໂອກາດດຽວກັນ, ຄະນະດັ່ງກ່າວ ຍັງໄດ້ລົງຕິດຕາມພື້ນທີ່ຄວາມສ່ຽງຈາກ ສະພາບນ້ຳຖ້ວມໃນລະດູຝົນ ຢູ່ຈຸດປາກ ຫວ້ຍຂອງບ້ານຫວ້ຍປຸນ ແລະ ປາກຫ້ວຍ ຂອງບ້ານແກ ນະຄອນປາກເຊ ແຂວງຈຳ ປາສັກ ຊຶ່ງ 2 ຈຸດ ຂອງ 2 ບ້ານ ແມ່ນມີ ສະພາບນ້ຳຖ້ວມໃນລະດູຝົນຂອງແຕ່ລະປີ ຜ່ານມາ ເນື່ອງຈາກເປັນພື້ນທີ່ຕ່ຳ, ການ ກໍ່ສ້າງຖຸກັນນ້ຳຖ້ວມ (ກັນຕາຝັ່ງເຈື່ອນ) ທັງຢູ່ບ້ານ ຫ້ວຍປຸນ ແລະ ບ້ານແກ ແມ່ນ ບໍ່ທັນສຳເລັດ ແລະ ໄດ້ມາດຕະຖານ. ການລົງຕິດຕາມຄັ້ງນີ້, ກໍເພື່ອກວດກາເບິ່ງ ສະພາບຕົວຈິງຂອງພື້ນທີ່, ຊຸກຍູ້, ຊີ້ນຳເຮັດ ໃຫ້ໃຫ້ການກໍ່ສ້າງຖຸກັນນ້ຳຖ້ວມ (ກັນຕາ ຝັ່ງເຈື່ອນ) ທັງ 2 ບ້ານດຳເນີນໄປຢ່າງມີ ປະສິດທິພາບ, ປະສິດທິຜົນສຳເລັດທັນ ຕາມກຳນົດເວລາ ແລະ ສາມາດປ້ອງກັນ ໄດ້ຈາກໄພພິບັດນ້ຳຖ້ວມ, ນ້ຳຊຸໃນລະດູ ຝົນທີ່ອາດຈະເກີດຂຶ້ນ ໃນປີ 2027 ທີ່ຈະ ມາເຖິງ.

ຂ່າວ: ເກດສະໜາ, ພາບ: ຈັນທະ ວິສັກ

◆ ຂ່າວພາຍໃນ · 11:02 ໂມງ · ອ່ານ 2 ຄັ້ງ

ຫາລືການນຳໃຊ້ກົດໝາຍ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ



ໂດຍການເປັນປະທານຮ່ວມຂອງ ທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ຄຳ ພັນ ພິມມະທັດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງຍຸຕິທຳ, ມີ ທ່ານນາງ ທຸມມາລີ ວົງພະຈັນ ປະທານ ກຳມາທິການກົດໝາຍ ແລະ ຍຸຕິທຳ, ທ່ານ ບົວຄົງ ນາມ ມະວົງ ຮອງປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນ ສູນກາງ, ທ່ານ ອາລຸນໄຊ ສູນນະລາດ ເລຂາຄະນະ ບໍລິຫານການພັກແຂວງຈຳປາສັກ ພ້ອມດ້ວຍຄະນະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 14:57 ໂມງ · ອ່ານ 7 ຄັ້ງ

2 ກະຊວງຮ່ວມປຶກສາຫາລືປັບປຸງ,ເສັ້ນທາງ 13 ເໜືອແຕ່ເມືອງໂພນໂຮງ ຫາ ເມືອງກາສີ ແຂວງວຽງຈັນ.



ໃນວັນທີ 6 ພະຈິກ 2026 ຜ່ານມານີ້, ກະຊວງການເງິນ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ໄດ້ຈັດກອງປະຊຸມຮ່ວມກັນເພື່ອປຶກສາຫາລືວຽກງານຕ່າງໆ ທີ່ຕິດພັນກັບຂະແໜງໂຍທາທິການ ແລະ ຂົນສົ່ງເປັນຕົ້ນ: ການຈັດ ຕັ້ງປະຕິບັດກອງທຶນທາງ, ກົນໄກການຈັດຕັ້ງ ປະຕິບັດການປັບປຸງ, ການຍົກລະດັບເສັ້ນທາງ 13 ເໜືອ ແຕ່ເມືອງໂພນໂຮງ ຫາ ເມືອງກາສີ ແຂວງວຽງຈັນ.

ໂດຍເປັນປະທານຂອງທ່ານ ສັນຕິພາບ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ;ມີ ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ມີຄະນະກົມ, ຄະນະກຳມະການຄຸ້ມຄອງ ແລະ ສົ່ງເສີມການລົງທຶນ; ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ, ອົງການກວດກາແຫ່ງລັດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງການເງິນເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວຖືເປັນວາລະສຳຄັນໃນການໃນການຮ່ວມປຶກສາຫາລືກ່ຽວກັບວຽກງານ ຍທຂ, ພ້ອມທັງໄດ້ຮັບຟັງການລາຍງານໂດຍສັງເຂບຈາກກະຊວງໂຍທາທິການ ແລະ ຂົນສົ່ງ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີກ່ຽວກັບການຈັດສັນງົບປະມານໃນໄລຍະຜ່ານມາ, ການຈັດສັນງົບປະມານບ້ອງກອງທຶນທາງປີ 2027 ແລະ ປີຕໍ່ໆໄປ, ເພື່ອເຮັດໃຫ້ເສັ້ນທາງຫຼວງແຫ່ງຊາດໄດ້ຮັບການສ້ອມແປງ ແລະ ປັບປຸງຍົກລະດັບເປັນທາງປູຢາງ ຫຼື ທາງເບຕົງຢ່າງມີຈຸດສຸມ, ພ້ອມທັງຮັບປະກັນໃຫ້ການສັນຈອນມີຄວາມໂລ່ງລ່ຽນ, ຍືນຍົງ, ເຮັດໃຫ້ການຈັດສັນງົບປະມານມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບສະພາບການຕົວຈິງຕາມຈຸດປະສົງ, ເປົ້າໝາຍຂອງນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; ການຈັດຕັ້ງປະຕິບັດໂຄງການປັບປຸງຍົກລະດັບທາງຫຼວງແຫ່ງຊາດເລກ 13 ເໜືອ, ຮັບຟັງການລາຍງານຜົນການປະຊຸມປຶກສາຫາລືລະຫວ່າງກະຊວງ ຍທຂ ແລະ ຫສນຍ ນຳຕື່ມອີກ.


ພ້ອມນີ້, ໃນກອງປະຊຸມໄດ້ຮັບຟັງການລາຍງານຈາກກະຊວງ ຍທຂ ກ່ຽວກັບການຈັດຕັ້ງປະຕິບັດເກັບຄ່າຜ່ານທາງຂອງແຕ່ລະສະຖານີໂດຍການນຳໃຊ້ລະບົບໄມ້ກັ້ນ (ເກັບແບບ Manual) ໃນໄລຍະທີ່ຍັງບໍ່ທັນມີລະບົບເກັບເງິນແບບທັນສະໄໝ ໂຄງການຟື້ນຟູ ແລະ ບູລະນະຮັກສາທາງຫຼວງແຫ່ງຊາດເລກ 9 ແຕ່ວຽງຈັນໄດໂມເສົາ ນະຄອນໄກສອນ ພົມວິຫານ ຫາ ຊາຍແດນລາວ-ຫວຽດນາມ ເມືອງເຊໂປນ ແຂວງສະຫວັນນະເຂດ, ໃນກອງປະຊຸມບັນດາຜູ້ຕາງໜ້າຈາກບັນດາຂະແໜງການທີ່ກ່ຽວຂ້ອງ ຍັງໄດ້ປະກອບຄຳຄິດຄຳເຫັນ ຢ່າງກົງໄປກົງມາເພື່ອຊອກຫາຊ່ອງທາງ ແລະ ມາດຕະການແກ້ໄຂຕ່າງໆ.

ໂອກາດດັ່ງກ່າວ, ທ່ານ ສັນຕິພາບ ພົມວິຫານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ໄດ້ໃຫ້ທິດຊີ້ນຳຢ່າງເລິກເຊິ່ງຕໍ່ແຕ່ລະໜ້າວຽກ ໂດຍເນັ້ນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ເອົາໃຈໃສ່ຕິດຕາມກົນໄກການຈັດຕັ້ງປະຕິບັດໂຄງການປັບປຸງຍົກລະດັບທາງຫຼວງແຫ່ງຊາດເລກ 13 ເໜືອ, ການຈັດສັນງົບປະມານບ້ອງກອງທຶນທາງ (ສຳລັບປີ 2027 ແລະ ປີຕໍ່ໄປ) ໃຫ້ສອດຄ່ອງກັບສະພາບການຕົວຈິງຮັບປະກັນການນຳໃຊ້ງົບປະມານໃຫ້ເກີດຜົນປະໂຫຍດສູງສຸດ, ລວມທັງມາດຕະການຕ່າງໆຕໍ່ໂຄງການຟື້ນຟູ ແລະ ບູລະນະຮັກສາທາງຫຼວງແຫ່ງຊາດເລກ 9. ທັງນີ້, ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວມີຄວາມເປັນເອກະພາບ, ການຄຸ້ມການຈັດເກັບລາຍຮັບໃຫ້ມີຄວາມເປັນເອກະພາບ, ໂປ່ງໃສ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ທີ່ມາ: ກະຊວງການເງິນ

◆ ເສດຖະກິດ-ສັງຄົມ · 15:02 ໂມງ · ອ່ານ 5 ຄັ້ງ

ໄລຍະ 9 ເດືອນຕົ້ນປີນີ້ ເສດຖະກິດ ນວ ຂະຫຍາຍຕົວໃນລະດັບ 6,2%



ໃນໄລຍະ 9 ເດືອນຕົ້ນປີ 2026 ນີ້, ເສດຖະກິດຂອງນະຄອນຫລວງວຽງຈັນ (ນວ) ຂະຫຍາຍຕົວຢູ່ໃນລະດັບ 6,2%, ຄາດຄະເນໝົດປີຈະໃຫ້ຂະຫຍາຍຕົວຢູ່ໃນລະດັບ 7,6% (ແຜນ ການປີ ໃຫ້ບັນລຸ 8%) ທຽບໃສ່ໄລຍະດຽວຂອງປີຜ່ານມາ ຂະຫຍາຍຕົວໃນລະດັບ 6,6%, ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸ 95.351,54 ຕື້ກີບ (ແຜນການປີ ໃຫ້ບັນລຸ 100.427 ຕື້ກີບ), GDP ສະເລ່ຍຕໍ່ຫົວຄົນ 106 ລ້ານກີບ (ແຜນການປີ ໃຫ້ໄດ້ 94,10 ລ້ານກີບ).

ທ່ານ ສີລິລາດທິລົນ ທອງເພັງ ຮອງເລຂາ ຄະນະພັກ, ປະທານຄະນະກຳມະການປົກຄອງນະ ຄອນຫລວງວຽງຈັນ ລາຍງານໃຫ້ຮູ້ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ຊຸດທີ V ໃນວັນທີ 10 ພະຈິກ 2026 ນີ້ວ່າ: ໃນ 9 ເດືອນຕົ້ນປີນີ້ ເສດຖະ ກິດຂອງນະຄອນຫລວງວຽງຈັນ ຂະຫຍາຍຕົວຢູ່ໃນລະດັບ 6,2%. ໃນນັ້ນ, ຂະແໜງກະສິກຳຂະ ຫຍາຍຕົວ ໃນລະດັບ 7% ກວມເອົາ 15,5%, ອັນພື້ນເດັ່ນແມ່ນດ້ານການປູກຝັງເຫັນວ່າມີທ່າອ່ຽງທີ່ດີ. ນອກຈາກນີ້, ການຜະລິດ ແລະ ສະໜອງຊີ້ນສັດກໍ່ຄາດວ່າຈະລື່ນແຜນ; ຂະແໜງອຸດສາຫະກຳ ຂະ ຫຍາຍຕົວ ໃນລະດັບ 8,3%, ກວມເອົາ 47,8%, ເຫັນວ່າຈຳນວນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເຖິງວ່າຈະບັນລຸຕາມແຜນ ແຕ່ມູນຄ່າການຜະລິດຫັດຖະກຳ ແລະ ການຂຸດຄົ້ນແຮ່ທາດຕ່າງໆ ມີຄ່າອ່ຽງທີ່ຂະຫຍາຍຕົວຊ້າ ແລະ ຄາດວ່າຈະບໍ່ບັນລຸ; ຂະແໜງບໍລິການ ຂະຫຍາຍຕົວ ໃນລະດັບ 6,9%, ກວມເອົາ 36,7% ເຖິງວ່າການບໍລິການຂາຍຍົກ-ຂາຍຍ່ອຍ, ການຈາລະຈອນສິນຄ້າ ແລະ ການຂົນສົ່ງ ໂດຍສານຂະຫຍາຍຕົວດີ. ເຖິງຢ່າງໃດກໍຕາມ ດ້ານຂະແໜງບໍລິການໂຮງ ແຮມ-ຮ້ານອາຫານ ຕິດພັນກັບການທ່ອງທ່ຽວ ມີ

ຕໍ່ໜ້າ 8

ໄລຍະ 9 ເດືອນຕົ້ນປີນີ້ ເສດຖະກິດ ນອ ຂະຫຍາຍຕົວໃນລະດັບ 6,... (ຕໍ່ຈາກໜ້າ 7)

ທ່າອ່ຽງທີ່ຂະຫຍາຍຕົວຊ້າ.

ສຳລັບປີ 2027 ທີ່ຈະມາເຖິງນີ້, ນະຄອນຫລວງວຽງຈັນ ຈະສຸມໃສ່ສ້າງຄວາມເຂັ້ມແຂງດ້ານເສດຖະກິດໃຫ້ເພີ່ມຂຶ້ນ ເພື່ອຮອງຮັບຄວາມຜັນຜວນຈາກພາຍນອກ ດ້ວຍການຍູ້ແຮງການຂະຫຍາຍຕົວເສດຖະກິດ ຕາມທິດວ່ອງໄວ, ມີຄຸນນະພາບ ແລະ ຍືນຍົງ, ນຳໃຊ້ທຸກທ່າແຮງປັ່ນຊ້ອນ ຢ່າງມີປະສິດທິຜົນ, ສືບຕໍ່ຮັກສາສະຖຽນລະພາບເສດຖະກິດມະຫາພາກ, ຊຸກຍູ້ການສົ່ງອອກໃຫ້ເພີ່ມຂຶ້ນ, ເພີ່ມທະວີດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ ທີ່ມີຄຸນນະພາບ ແລະ ນຳໃຊ້ໂອກາດຈາກການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ເພື່ອຂັບເຄື່ອນການປ່ຽນແປງໂຄງສ້າງເສດຖະກິດ ໃຫ້ຍືນຍົງ, ລວມທັງການພັດທະນາຊັບພະຍາກອນມະນຸດ, ການຍົກລະດັບຄວາມສາມາດແຂ່ງຂັນຂອງພາກເອ ກະຊົນພາຍໃນ ແລະ ປົກປັກຮັກສາວັດທະນະທຳ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ. ພ້ອມນີ້, ຍັງຈະສຸມໃສ່ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທຸກທ່າແຮງປັ່ນຊ້ອນ ເພື່ອເຮັດໃຫ້ເສດຖະກິດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ, ໝັ້ນທ່ຽງ ແລະ ຍືນຍົງ.

ຂ່າວ: ທະນູທອງ

ພາບ: ນາງອີ້ນ

ເຫດການ

◆ ເຫດການ · 09:20 ໂມງ · ອ່ານ 8 ຄັ້ງ

ກັກຕົວຄົນໄທ 11 ຄົນ ລາວ 1 ຄົນ ລັກລອບເປີດເວັບພະນັນອອນລາຍຢູ່ບ້ານວັດສົບ ເມືອງສີຕັດຕະນາກ



ໃນອາທິດຜ່ານມາ ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ເຂົ້າກວດກາເຮືອນໃຫ້ເຊົ່າຢູ່ບ້ານວັດສົບ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ສົງໃສວ່າມີກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການພະນັນອອນລາຍ; ຜ່ານການກວດກາ ສາມາດກັກຕົວຜູ້ຖືກຫາເປັນຄົນສັນຊາດໄທ 11 ຄົນ ຍິງ 2 ຄົນ, ຄົນລາວ 1 ຄົນ; ພ້ອມຍຶດເຄື່ອງຂອງກາງທີ່ນຳໃຊ້ເຂົ້າໃນການກະທຳຜິດ ມີໂທລະສັບ 11 ເຄື່ອງ, ຄອມພິວເຕີຕັ້ງໂຕະ 20 ເຄື່ອງ.

ທີ່ມາ: ຄວາມສະຫງົບ Lao Security News

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສຶດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 22 ໃນສະບັບນີ້

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

◆ ໄລຟ໌ສະໄຕລ໌ · 15:43 ໂມງ · ອ່ານ 10 ຄັ້ງ

ມີໃຜຄິດຮອດກິ່ນດອກຕີນເປັດຄືກັນແມ່? ກິ່ນຫອມແຫ່ງລົມໜາວກັບມາແລ້ວ!



ເມື່ອລົມໜາວເລີ່ມພັດຜ່ານ ອາກາດເຢັນໆ ແລະ ກິ່ນຫອມອ່ອນໆ ຂອງດອກຕີນເປັດກໍເລີ່ມລອຍມາຕາມສາຍລົມ ປຸກຄວາມຮູ້ສຶກຄຸ້ນເຄີຍຂອງລະດູໜາວໃຫ້ກັບຄືນມາອີກຄັ້ງ.

ອາກາດຍາມເຊົ້າເລີ່ມມີຄວາມໜາວສຳຜັດຜິວ ແລະ ເມື່ອລະດູການແຕ່ງຄວາມເຢັນຄ່ອຍໆ ກ້າວເຂົ້າມາ ມີສິ່ງໜຶ່ງທີ່ຫຼາຍຄົນລໍຄອຍ ແລະ ຄິດຮອດທຸກໆ ປີ ນັ້ນກໍຄືກິ່ນຫອມຂອງດອກຕີນເປັດ ດອກໄມ້ນ້ອຍໆ ທີ່ມີສະເໜ່ພິເສດ ຈົນກາຍເປັນໜຶ່ງໃນສັນຍາລັກຂອງລະດູໜາວໃນຄວາມຊົງຈຳຂອງຫຼາຍຄົນ.

ຕົ້ນດອກຕີນເປັດ ເປັນຕົ້ນໄມ້ທີ່ອາດຈະເບິ່ງທຳມະດາເມື່ອບໍ່ທັນອອກດອກ ແຕ່ເມື່ອຮອດລະດູການຂອງມັນ ດອກນ້ອຍໆ ສີເຫຼືອງນວນກໍຈະຄ່ອຍໆ ຜຸດຂຶ້ນຕາມກິ່ງງ່າ ສ້າງຄວາມງົດງາມໃຫ້ແກ່ຕົ້ນໄມ້. ແຕ່ສິ່ງທີ່ເຮັດໃຫ້ດອກໄມ້ຊະນິດນີ້ໂດດເດັ່ນ ບໍ່ແມ່ນພຽງຮູບຊົງ ຫຼື ສີສັນຂອງມັນ ແຕ່ແມ່ນກິ່ນຫອມອັນເປັນເອກະລັກ ທີ່ສາມາດລອຍມາຕາມສາຍລົມ ແລະ ກະຈາຍໄປທົ່ວບໍລິເວນ.

ບາງຄັ້ງເຮົາອາດຈະຍ່າງຜ່ານຖະໜົນສາຍໜຶ່ງ, ນັ່ງພັກຢູ່ໃຕ້ຮົ່ມໄມ້ ຫຼື ເປີດປ່ອງຢ້ຽມຮັບລົມໃນຕອນເຊົ້າ ແລ້ວຈູ່ໆ ກໍໄດ້ກິ່ນຫອມອ່ອນໆ ລອຍມາແຕະດັງ. ພຽງຊົ່ວຂະນະນັ້ນ ກໍອາດເຮັດໃຫ້ເຮົາຢຸດຄິດ ແລະ ຫັນໄປມອງຫາຕົ້ນໄມ້ທີ່ກຳລັງອອກດອກ. ນີ້ຄືສະເໜ່ຂອງດອກຕີນເປັດທີ່ບໍ່ຈຳເປັນຕ້ອງປະກາດຕົວ ແຕ່ກໍສາມາດເຮັດໃຫ້ຄົນຈື່ຈຳໄດ້ດ້ວຍກິ່ນຫອມຂອງມັນ.

ບາງຄົນກໍມັກກິ່ນຫອມຂອງດອກຕີນເປັດ ເພາະມັນຄືສັນຍານຂອງລະດູໜາວ ກິ່ນຫອມທີ່ລອຍມາຕາມສາຍລົມເຮັດໃຫ້ຮູ້ສຶກສົດຊື່ນ ແລະ ພາຄວາມຊົງຈຳດີໆ ກັບຄືນມາ ແຕ່ບາງຄົນກໍບໍ່ມັກ ເພາະຮູ້ສຶກວ່າກິ່ນຂອງມັນແຮງເກີນໄປ ຫອມຈົນວິນຫົວ ຫຼື ບໍ່ຖືກກັບຄວາມມັກຂອງຕົນເອງ.

ບາງຄົນພຽງໄດ້ກິ່ນກໍຍິ້ມ ແຕ່ບາງຄົນພັດຢາກຍ່າງໜີ ນີ້ຄືສະເໜ່ຂອງກິ່ນຫອມ ເພາະກິ່ນດຽວກັນອາດສ້າງຄວາມຮູ້ສຶກທີ່ແຕກຕ່າງກັນໃນແຕ່ລະຄົນ.

ແຕ່ສິ່ງໜຶ່ງທີ່ປະຕິເສດບໍ່ໄດ້ຄື ເມື່ອດອກຕີນເປັດເລີ່ມສົ່ງກິ່ນຫອມ ມັນກໍຄືການປະກາດວ່າລະດູໜາວກຳລັງມາຮອດອີກແລ້ວ.

ຄວາມພິເສດຂອງລະດູໜາວ ບໍ່ໄດ້ມີພຽງອາກາດເຢັນ ຫຼື ທ້ອງຟ້າທີ່ແຈ່ມໃສເທົ່ານັ້ນ ແຕ່ຍັງມີກິ່ນອາຍຂອງທຳມະຊາດທີ່ປ່ຽນໄປຕາມລະດູການ. ຕົ້ນໄມ້ຫຼາຍຊະນິດເລີ່ມຜະລິດດອກ, ສວນສີຂຽວເຕັມໄປດ້ວຍຊີວິດຊີວາ ແລະ ກິ່ນຫອມຂອງດອກຕີນເປັດກໍກາຍເປັນອີກໜຶ່ງສິ່ງທີ່ຊ່ວຍເຕີມເຕັມບັນຍາກາດໃຫ້ມີສະເໜ່ຫຼາຍຂຶ້ນ.

ບາງຄັ້ງຄວາມສຸກກໍບໍ່ໄດ້ຢູ່ໄກ ອາດຈະເປັນພຽງສາຍລົມເຢັນໆ ກັບກິ່ນດອກໄມ້ທີ່ລອຍມາທັກທາຍເຮົາໃນຍາມເຊົ້າ.

ໃຜມີຕົ້ນດອກຕີນເປັດຢູ່ແຖວບ້ານ ຫຼື ເຄີຍໄດ້ກິ່ນຫອມຂອງມັນ ມາແບ່ງປັນຮູບພາບ ແລະ ຄວາມຊົງຈຳກັນແດ່ເດີ!

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 14:45 ໂມງ · ອ່ານ 18 ຄັ້ງ

ເຫດການສະຫຼົດໃຈ! ພົບຮ່າງເດັກຍິງເຊື້ອຊາດຫວຽດນາມ ອາຍຸ 13 ປີ ຫຼັງຫາຍຕົວ 5 ມື້ ໃນເຢຍລະມັນ



ເຈົ້າໜ້າທີ່ສືບສວນເຢຍລະມັນກຳລັງເລັ່ງກວດສອບຫາສາເຫດການເສຍຊີວິດຂອງເດັກຍິງເຊື້ອຊາດຫວຽດນາມ ອາຍຸ 13 ປີ ຫຼັງຈາກພົບຮ່າງຂອງນ້ອງຢູ່ໃນເຮືອນທີ່ບໍ່ມີຄົນອາໄສໃນລັດບຣັນເດັນບວກ (Brandenburg) ໂດຍຄາດວ່າຜົນການຊັນສູດຮ່າງຜູ້ເສຍຊີວິດຈະຊ່ວຍໃຫ້ໄດ້ຮູ້ເຫດການທີ່ເປັນຄວາມຈິງທີ່ເກີດຂຶ້ນກັບນ້ອງ.

ລີຊ່າ ຕາ (Lisa Tạ) ເດັກຍິງທີ່ຫາຍຕົວໄປຂະນະເດີນທາງໄປໂຮງຮຽນໃນກຸງເບີລິນ ເມື່ອວັນທີ 3 ພະຈິກ 2026 ຖືກພົບເປັນສົບໃນວັນອາທິດທີ 08 ພະຈິກ 2026 ຢູ່ໃນເຮືອນຫຼັງໜຶ່ງໃນ ເມືອງອັລກລິດເຊັນ (Altglietzen), ເຂດບາດ ໄຟຣເອັນວັລເດ (Bad Freienwalde) ລັດ ບຣັນເດັນບວກ (Brandenburg) ຫ່າງຈາກນະຄອນຫຼວງເບີລິນໄປທາງຕາເວັນອອກສຽງເໜືອປະມານ 50 ກິໂລແມັດ.

ຕາມຖະແຫຼງການຮ່ວມຂອງ ຕຳຫຼວດ ແລະ ໄອຍະການເບີລິນ ຊາບວ່າ: ຊາຍຄົນໜຶ່ງທີ່ຖືກພົບວ່າບາດເຈັບສາຫັດຢູ່ຂ້າງຮ່າງຂອງເດັກຍິງ ໄດ້ຖືກຈັບກຸມໃນຂໍ້ສົງໄສວ່າມີສ່ວນຮັບຜິດຊອບຕໍ່ການເສຍຊີວິດຂອງນ້ອງ ລີຊ່າ.

ຜູ້ຖືກສົງໄສກຳລັງປິ່ນປົວຢູ່ໂຮງໝໍໃນອາການວິກິດ ແລະ ມີຕຳຫຼວດເຝົ້າຄຸມຕົວ. ນັກສືບສວນເຊື່ອວ່າບາດແຜຂອງລາວເກີດຈາກການທຳຮ້າຍຕົນເອງ. ຢ່າງໃດກໍຕາມ ເຈົ້າໜ້າທີ່ຍັງບໍ່ສາມາດລະບຸຕົວຕົນຂອງຊາຍຄົນດັ່ງກ່າວໄດ້.

ມິຄາເອນ ເພັດໂຊລ (Michael Petzold) ໂຄສົກໄອຍະການເບີລິນ ໃຫ້ຂໍ້ມູນກັບສື່ມວນຊົນເຢຍລະມັນວ່າ ສະພາບແວດລ້ອມແລະເຫດການທີ່ນຳໄປສູ່ການເສຍຊີວິດຂອງ ນ້ອງ ລີຊ່າ Lisa ຍັງບໍ່ມີຄວາມຊັດເຈນ. ຄາດວ່າຈະມີພິສູດສົບໃນວັນຈັນ ທີ 9 ພະຈິກ 2026 ເພື່ອຊ່ວຍລະບຸສາເຫດ ແລະ ລາຍລະອຽດການເສຍຊີວິດ ຕາມລາຍງານຂອງສຳນັກຂ່າວ DPA ຂອງເຢຍລະມັນ.

ນັກສືບສວນຈາກສຳນັກງານຕຳຫຼວດອາຍາລັດເບີລິນ ແລະ ຕຳຫຼວດລັດ Brandenburg ກຳລັງກວດສອບສະຖານທີ່ເກີດເຫດ ແລະ ເກັບກຳຂໍ້ມູນຫຼັກຖານທາງນິຕິວິທະຍາ.

ການພົບສົບເກີດຂຶ້ນຫຼັງຈາກຕຳຫຼວດຈາກລັດ ບຣັນເດັນບວກ (Brandenburg) ໄດ້ຮັບແຈ້ງເຫດໃນເວລາປະມານທ່ຽງຂອງວັນອາທິດ ວ່າມີຄົນບຸກເຂົ້າໄປໃນເຮືອນທີ່ບໍ່ມີຄົນອາໄສຢູ່ໃນ ເມືອງອັລກລິດເຊັນ (Altglietzen) ໂດຍບໍ່ໄດ້ຮັບອະນຸຍາດ.

ເມື່ອເຈົ້າໜ້າທີ່ໄປກວດສອບ ກໍ່ພົບຮ່າງຂອງນ້ອງ ລີຊ່າ (Lisa) ແລະຊາຍທີ່ບາດເຈັບສາຫັດຢູ່ພາຍໃນເຮືອນ. ການພົບຮ່າງຜູ້ເສຍຊີວິດຄັ້ງນີ້ເປັນເຫດການທີ່ບໍ່ຄາດຄິດ ເນື່ອງຈາກກ່ອນໜ້ານັ້ນນັກສືບສວນບໍ່ພົບຫຼັກຖານທີ່ຊີ້ວ່າເດັກຍິງຖືກນຳຕົວໄປຍັງພື້ນທີ່ດັ່ງກ່າວ.

ທາງການໄດ້ເປີດປະຕິບັດການຄົ້ນຫາຄັ້ງໃຫຍ່ ຫຼັງຈາກ (Lisa ຫາຍຕົວໄປຈາກບ້ານໃນເຂດ (Marzahn) ຂອງ ກຸງເບີລິນ ເມື່ອວັນທີ 3 ພະຈິກ.

ນ້ອງ ລີຊ່າ ອອກຈາກບ້ານໃນເວລາປະມານ 7:15 ໂມງເຊົ້າ ເພື່ອເດີນທາງໄປໂຮງຮຽນ ແລະຄາດວ່າຈະຂຶ້ນລົດເມຢູ່ປ້າຍບານນິມພລັດຊ໌ (Barnimplatz) ໃນເວລາປະມານ 7:30 ໂມງ. ແຕ່ນ້ອງບໍ່ໄດ້ໄປຮອດໂຮງຮຽນ.

ທີ່ ມ າ : Vietnam News Service (VNS), ພາບປະກອບຈາກ Deutsche Presse-Agentur (DPA)

ໂທລະສັບມືຖືຂອງນ້ອງບໍ່ສາມາດຕິດຕໍ່ໄດ້ຫຼັງຈາກອອກຈາກບ້ານໄດ້ບໍ່ດົນ ແລະ ນັກສືບສວນບໍ່ພົບສັນຍານວ່ານາງຕັ້ງໃຈໜີອອກຈາກຄອບຄົວ ຫຼື ສັງຄົມທີ່ນາງຄຸ້ນເຄີຍ.

ຄະດີນີ້ຖືກໂອນໃຫ້ຊຸດສືບສວນຄາດຕະກຳທີ 5 ຂອງສຳນັກງານຕຳຫຼວດອາຍາລັດເບີລິນ ຫຼັງຈາກທາງການພົບຂໍ້ບົ່ງຊີ້ວ່າ ອາດມີອາຊະຍາກຳຮ້າຍແຮງເກີດຂຶ້ນ.

ຕຳຫຼວດໄດ້ລະດົມກຳລັງພົນຈຳນວນຫຼາຍ ພ້ອມໝາດົມກິ່ນ ແລະ ເຮລິຄອບເຕີ ເພື່ອຊ່ວຍໃນການຄົ້ນຫາ ພ້ອມທັງຂໍຄວາມຮ່ວມມືຈາກປະຊາຊົນໃຫ້ແຈ້ງຂໍ້ມູນທີ່ເປັນປະໂຫຍດ.

ຄະດີນີ້ຍັງມີຫຼາຍຄຳຖາມທີ່ລໍຖ້າຄຳຕອບ ວ່າເກີດຫຍັງຂຶ້ນກັບ ຄະດີນີ້ຍັງມີຫຼາຍຄຳຖາມທີ່ລໍຖ້າຄຳຕອບ ວ່າເກີດຫຍັງຂຶ້ນກັບ ນ້ອງ ລີຊ່າ (Lisa) ໃນຊ່ວງເວລາ 5 ມື້ ນັບຈາກການຫາຍຕົວໄປຈົນຮອດການພົບຮ່າງ.

ຂະນະນີ້ ນັກສືບສວນກຳລັງເລັ່ງລະບຸຕົວຕົນຂອງຜູ້ຕ້ອງສົງໄສ ກວດສອບວ່າລາວມີຄວາມສຳພັນກັບເດັກຍິງແນວໃດ ພ້ອມທັງຊອກຫາສາເຫດແລະ ແຮງຈູງໃຈຂອງເຫດການ.

ການສືບສວນດຳເນີນໂດຍອັຍະການເບີລິນ ແລະ ຊຸດສືບສວນຄາດຕະກຳຮ່ວມມືກັບຕຳຫຼວດລັດ (Brandenburg).

ໃນວັນທີ 9 ພະຈິກ 2026 ທາງການສາມາດລະບຸຕົວຜູ້ຕ້ອງສົງໄສໄດ້ແລ້ວ ເປັນຊາຍສັນຊາດເຢຍລະມັນ ອາຍຸ 22 ປີ ຈາກເບີລິນ ແຕ່ຜົນພິສູດຮ່າງຂອງນ້ອງ ລີຊ່າ ຍັງບໍ່ສາມາດສະຫຼຸບສາເຫດການເສຍຊີວິດໄດ້ເທື່ອ ແລະ ການສືບສວນຍັງດຳເນີນຕໍ່ໄປ.

ທີ່ມາ: ສຳນັກຂ່າວຫວຽດນາມ (VNS)

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 11:42 ໂມງ · ອ່ານ 17 ຄັ້ງ

ແຄ້ນເງິນຊົດເຊີຍ! ຊາຍຈີນຂັບລົດຈົກບຸກພັງສູນລາຊະການ ສ່ານຊີ



ວັນທີ 9 ພະຈິກ 2026 ເວລາ ປະມານ 10:00 ໂມງ, ເກີດເຫດຊາຍຂັບລົດຈົກ ບຸກທຳລາຍອາຄານສູນບໍລິການລາຊະການຂອງຄະນະກຳມະການບໍລິຫານເມືອງໃໝ່ ເຟີງຕົງ ເຂດເມືອງໃໝ່ ຊີເສຽນ ໃກ້ເມືອງຊີອານ ມົນທົນສ່ານຊີ ປະເທດຈີນ.

ສື່ຈີນລາຍງານໂດຍອ້າງອີງຈາກເຈົ້າໜ້າທີ່ທ້ອງຖິ່ນວ່າ ຜູ້ກໍ່ເຫດບໍ່ພໍໃຈເລື່ອງເງິນຊົດເຊີຍຈາກການຮື້ຖອນຟາມລ້ຽງສັດ ຈຶ່ງນຳລົດຂຸດເຂົ້າມາທຳລາຍອາຄານຂອງໜ່ວຍງານລັດ.

ພາບເຫດການທີ່ເຜີຍແຜ່ເທິງສື່ສັງຄົມອອນລາຍ ສະແດງໃຫ້ເຫັນລົດຂຸດຕີນຕະຂາບທີ່ຕິດຕັ້ງກະຍານ ໄຮໂດຣລິກ ຂັບເຂົ້າປະຊິດອາຄານ ກ່ອນໃຊ້ແຂນລົດຂຸດຕັດທຳລາຍກັນສາດບໍລິເວນໂຖງທາງເຂົ້າຊັ້ນ 1 ຈາກດ້ານໜຶ່ງຢ່າງຕໍ່ເນື່ອງ.

ກັນສາດດ້ານໜ້າອາຄານຖືກທຳລາຍຈົນພັງລົງທັງໝົດ ພ້ອມທັງປ້າຍຊື່ສູນບໍລິການລາຊະການໄດ້ຮັບຄວາມເສຍຫາຍ ເສດວັດສະດຸຈຳນວນຫຼວງຫຼາຍຫຼົ່ນກະຈັດກະຈາຍເທິງຂັ້ນໄດ ແລະ ບໍລິເວນທາງເຂົ້າອາຄານ.

ລະຫວ່າງເກີດເຫດມີສຽງປະຊາຊົນຮ້ອງດ້ວຍຄວາມຕົກໃຈ ພາບຈາກຫຼາຍມຸມເຜີຍໃຫ້ເຫັນໂຄງສ້າງດ້ານໜ້າອາຄານຖືກທຳລາຍຢ່າງຮຸນແຮງ.

ສື່ຈີນລາຍງານວ່າ ເຫດການດັ່ງກ່າວເກີດຂຶ້ນຄືນປະມານ 1 ຊົ່ວໂມງ ກ່ອນເຈົ້າໜ້າທີ່ຕຳຫຼວດຈະເຂົ້າຄວບຄຸມສະຖານະການ ແລະ ຈັບກຸມຜູ້ກໍ່ເຫດ.

ຕຳຫຼວດເຂດເມືອງໃໝ່ ຊີເສຽນ ອອກຖະແຫຼງການລະບຸວ່າ ໄດ້ຮັບແຈ້ງເຫດເວລາປະມານ 11:00 ນ່ຶງ ຕາມເວລາຈີນ ຫຼື 10:00 ນ່ຶງ ຕາມເວລາໄທ ວ່າລົບຸກຄົນໃຊ້ເຄື່ອງຈັກກໍ່ສ້າງທຳລາຍອາຄານສູນລາຊະການ.

ເຈົ້າໜ້າທີ່ເຂົ້າຄວບຄຸມຕົວຜູ້ຕ້ອງສົງໄສໃນຈຸດເກີດເຫດ ຊາບຊື່ວ່າ ຊາຍແຊ່ ຫູ ອາຍຸ 47 ປີ ໂດຍຍືນຢັນວ່າບໍ່ມີຜູ້ໄດ້ຮັບບາດເຈັບ ຫຼື ເສຍຊີວິດ.

ຕຳຫຼວດດຳເນີນມາດຕະການບັງຄັບທາງອາຍາກຳຕໍ່ຜູ້ຕ້ອງສົງໄສແລ້ວ ແລະ ຢູ່ລະຫວ່າງສອບສວນລາຍລະອຽດຂອງຄະດີ.

ສຳລັບປົມເງິນຊົດເຊີຍຈາກການຮື້ຖອນຟາມລ້ຽງສັດ ແມ່ນຂໍ້ມູນທີ່ສື່ຈີນລາຍງານໂດຍອ້າງອີງຈາກເຈົ້າໜ້າທີ່ທ້ອງຖິ່ນ ສ່ວນທາງຕຳຫຼວດຍັງບໍ່ທັນໄດ້ຢືນຢັນແຮງຈູງໃຈໃນການກໍ່ເຫດຢ່າງເປັນທາງການ.

ພາຍຫຼັງເຫດການດັ່ງກ່າວ ສູນບໍລິການລາຊະການໄດ້ກັບມາເປີດໃຫ້ບໍລິການຕາມປົກກະຕິໃນຊ່ວງບ່າຍຂອງວັນດຽວັນ, ສ່ວນມູນຄ່າຄວາມເສຍຫາຍ ແລະ ລາຍລະອຽດຂໍ້ພິພາດແມ່ນຍັງຢູ່ໃນລະຫວ່າງການກວດສອບ.

ທີ່ມາ: World Forum

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວຕ່າງປະເທດ · 09:47 ໂມງ · ອ່ານ 13 ຄັ້ງ

ເກົາຫຼີເໜືອທົດສອບລະບົບຕີປົກໃຕ້ນ້ຳຄວາມໄວສູງລຸ້ນໃໝ່ ເລັ່ງຍົກລະດັບຂີດຄວາມສາມາດກອງທັບເຮືອ ກຽມເຂົ້າປະຈຳການປີ 2027



ເກົາຫຼີເໜືອປະກາດຜົນການທົດສອບລະບົບອາວຸດຕີປົກໃຕ້ນ້ຳຄວາມໄວສູງລຸ້ນໃໝ່ ໂດຍນຳເອົາເທັກໂນໂລຊີປັນຍາປະດິດ (AI) ມາປະຍຸກໃຊ້ໃນລະບົບກວດຈັບເປົ້າໝາຍ ແລະ ລະບົບນຳວິຖີຂອງຕີປົກລຸ້ນໃໝ່.

ສຳລັບການທົດສອບຄັ້ງຫຼ້າສຸດ ສຳນັກຂ່າວ KCNA ລາຍງານວ່າ: ເປັນການກວດສອບເຕັກໂນໂລຊີທີ່ຊ່ວຍເພີ່ມປະສິດທິພາບລະບົບຂັບເຄື່ອນ ແລະ ແຮງຂັບຈາກລະບົບຈະຫຼວດ ຫຼັງຈາກດຳເນີນການທົດສອບມາແລ້ວຫຼາຍກວ່າ 180 ຄັ້ງ ໃນໄລຍະ 5 ປີຜ່ານມາ.

ສຳນັກຂ່າວກາງເກົາຫຼີ (KCNA) ລາຍງານວ່າ: ການທົດສອບດັ່ງກ່າວມີຂຶ້ນໃນວັນຈັນ ທີ 9 ພະຈິກ 2026 ຢູ່ທະເລຕາເວັນອອກ ຫຼື ທະເລຍີ່ປຸ່ນ ໂດຍຜົນການທົດສອບໄດ້ຢືນຢັນປະສິດທິພາບຂອງລະບົບອາວຸດລຸ້ນໃໝ່. ພ້ອມລະບຸວ່າ ອາວຸດນີ້ມີແຜນຈະນຳເຂົ້າປະຈຳການໃນກອງທັບເຮືອເກົາຫຼີເໜືອ ຕັ້ງແຕ່ຕົ້ນປີ 2027.

ການພັດທະນາອາວຸດຄັ້ງນີ້ເປັນສ່ວນໜຶ່ງຂອງແຜນການເສີມສ້າງຂີດຄວາມສາມາດທາງທະເລ ແລະການໂຈມຕີໃຕ້ນ້ຳຂອງພຽງຢາງ ທ່າມກາງສະຖານະການຄວາມຕຶງຄຽດໃນແຫຼມເກົາຫຼີ.

ນອກຈາກນີ້ ໃນຊ່ວງຜ່ານມາ ເກົາຫຼີເໜືອຍັງໄດ້ທົດສອບອາວຸດຫຼາຍປະເພດ ລວມທັງໂດຣນໂຈມຕີ ແລະຂີປະນາວຸດໄຮເປີໂຊນິກ ສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມໃນການຍົກລະດັບເທັກໂນໂລຊີທາງທະຫານ.

ຂະນະດຽວກັນ ນັກວິເຄາະມອງວ່າ ການນຳ AI ມາໃຊ້ກັບລະບົບຕີປົກອາດຊ່ວຍເພີ່ມຄວາມສາມາດໃນການຈຳແນກເປົ້າໝາຍ ແລະຫຼີກລ່ຽງສິ່ງລໍ້ລວງໄດ້. ແນວໃດກໍຕາມ ຜູ້ຊ່ຽວຊານຍັງຕັ້ງຂໍ້ສັງເກດວ່າ ເກົາຫຼີເໜືອຍັງຕ້ອງພັດທະນາເຕັກໂນໂລຊີອີກຫຼາຍດ້ານ ໂດຍສະເພາະການຫຼຸດສຽງລົບກວນຂອງຕີປົກຂະນະເຄື່ອນທີ່ໃຕ້ນ້ຳ ເຊິ່ງເປັນປັດໄຈສຳຄັນຕໍ່ການຫຼີກລ່ຽງການກວດຈັບ.

ການທົດສອບຄັ້ງນີ້ເກີດຂຶ້ນໃນຂະນະທີ່ເກົາຫຼີເໜືອ ແລະເກົາຫຼີໃຕ້ກຳລັງເພີ່ມການພັດທະນາອາວຸດສະໄໝໃໝ່ ທ່າມກາງຄວາມກັງວົນຕໍ່ສະຖານະການຄວາມໝັ້ນຄົງໃນພາກພື້ນ.

ທີ່ມາຂ່າວ: channelnewsasia

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 22 ໃນສະບັບນີ້

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ
ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວຕ່າງປະເທດ · 11:40 ໂມງ · ອ່ານ 11 ຄັ້ງ

ທຣຳກ່າວອ່ຳ FBI ສືບສວນຄວາມສຳພັນສ່ວນຕົວຂອງ CEO Nvidia ກັບສາວຈີນທີ່ຖືກກ່າວຫາວ່າເປັນສາຍລັບ ຂະນະຫຸ້ນບໍລິສັດຕົກ 2.5 ແສນລ້ານໂດລາ



ປະທານາທິບໍດີ ໂດນັລ ທຣຳ ແຫ່ງ ສະຫະລັດ ເປີດເຜີຍວ່າ ສຳນັກງານ ສືບສວນກາງສະຫະລັດ (FBI) ກຳລັງ ກວດສອບຄວາມສຳພັນລະຫວ່າງ ເຈນ ເຊນ ຫວງ (Jensen Huang) ປະທານບໍລິຫານຂອງ Nvidia ກັບນັກ ທຸລະກິດຍິງຊາວຈີນ ທີ່ຖືກກ່າວຫາວ່າເປັນ ສາຍລັບໃຫ້ແກ່ລັດຖະບານປັກກິ່ງ.

ທຣຳ ລະບຸວ່າ ລາວໄດ້ໂທລະສັບ ລົມກັບຫວງໃນວັນຈັນຜ່ານມາ ໂດຍໄດ້ ຖາມວ່າ ຮູ້ຫຼືບໍ່ວ່າຜູ້ຍິງຄົນດັ່ງກ່າວເປັນສາຍ ລັບ. ເຊິ່ງຫວງຕອບວ່າບໍ່ຮູ້ເລື່ອງນີ້ ຂະນະ ທີ່ທຣຳສະແດງຄວາມເຊື່ອໝັ້ນວ່າ ຫວງຈະ ສາມາດຜ່ານການສືບສວນໄປໄດ້ດ້ວຍດີ.

ຜູ້ຍິງຄົນດັ່ງກ່າວຊື່ ອາລິສ ຫວງ ຫຼື ຫວງ ເລີ ອະດີດຜູ້ບໍລິຫານບໍລິສັດ Megaspeed ໃນສິງກະໂປ ເຊິ່ງມີ ຄວາມສຳພັນທາງທຸລະກິດກັບ Nvidia. ໜ່ວຍຂ່າວກອງສະຫະລັດເຊື່ອວ່າ ນາງ ອາດມີສ່ວນກ່ຽວຂ້ອງກັບປະຕິບັດການ ຈາລະກຳຂອງຈີນ. ທັງນີ້ ນາງບໍ່ໄດ້ມີສາຍ ສຳພັນທາງເຄືອຍາດກັບ ເຈນເຊນ ຫວງ.

ດ້ານກະຊວງການຕ່າງປະເທດຈີນ ໄດ້ປະຕິເສດຂໍ້ກ່າວຫາດັ່ງກ່າວ ໂດຍລະບຸ ວ່າ ເປັນຂໍ້ກ່າວຫາທີ່ບໍ່ມີມູນຄວາມຈິງ ເປັນ ພຽງການຄາດເດົາ ແລະມີເຈດຕະນາໃສ່ ຮ້າຍຈີນ.

ຂະນະທີ່ Nvidia ເປີດເຜີຍວ່າ ຄະນະກຳມະການບໍລິສັດໄດ້ຈັດຕັ້ງຄະນະ ສືບສວນອິດສະຫຼະ ເພື່ອກວດສອບວ່າ ຫວງຕົກເປັນເປົ້າໝາຍຂອງປະຕິບັດການ ຂ່າວກອງຈາກຕ່າງປະເທດຫຼືບໍ່ ພ້ອມ ຢືນຢັນວ່າ ບໍ່ມີຫຼັກຖານທີ່ຊີ້ວ່າ ຄວາມລັບ ຂອງບໍລິສັດ ຫຼືຄວາມໝັ້ນຄົງແຫ່ງຊາດຖືກ ລະເມີດ.

ແນວໃດກໍຕາມ ຂ່າວດັ່ງກ່າວໄດ້ສົ່ງ ຜົນກະທົບຕໍ່ລາຄາຫຸ້ນ Nvidia ໂດຍຫຸ້ນ ປັບຕົວຫຼຸດລົງຫຼາຍກວ່າ 4% ໃນວັນຈັນ ທີ 9 ພະຈິກ ສົ່ງຜົນໃຫ້ມູນຄ່າຕະຫຼາດ ຂອງບໍລິສັດຫາຍໄປປະມານ 250,000 ລ້ານໂດລາສະຫະລັດພາຍໃນມື້ດຽວ.

ນອກຈາກນີ້ ເຈນເຊນ ຫວງ ແລະ Nvidia ຍັງຖືກຜູ້ຖືຫຸ້ນຍື່ນຟ້ອງຄະດີ ແບບກຸ່ມໃນລັດຄາລິຟໍເນຍ ໂດຍກ່າວຫາ ວ່າ ມີການປິດບັງຄວາມສຳພັນກັບຜູ້ຍິງທີ່ ຕ້ອງສົງໄສວ່າເປັນສາຍລັບ ແລະຫຼອກລວງ ຜູ້ຖືຫຸ້ນ. ຂະນະທີ່ສະມາຊິກສະພາ ນິຕິບັນຍັດສະຫະລັດຮຽກຮ້ອງໃຫ້ມີການ ກວດສອບເພີ່ມເຕີມ ແລະອາດຜັກດັນ ມາດຕະການຈຳກັດການສົ່ງອອກຊິບ AI ໄປຍັງຈີນໃຫ້ເຂັ້ມງວດຍິ່ງຂຶ້ນ.

ກ່ອນໜ້ານີ້ ຫວງໄດ້ຍອມຮັບວ່າ ຕົນເອງເຄີຍນອກໃຈພັນລະຍາ ພ້ອມກ່າວ ຂໍໂທດຄອບຄົວ ແລະ ຢືນຢັນວ່າ ຈະໃຫ້ ຄວາມຮ່ວມມືກັບການສືບສວນ ເພື່ອ ປົກປ້ອງ Nvidia ແລະສະໜັບສະໜຸນ ຄວາມໝັ້ນຄົງຂອງສະຫະລັດ.ກໍລະນີດັ່ງ ກ່າວຍັງເພີ່ມແຮງກົດດັນຕໍ່ Nvidia ເຊິ່ງ ເປັນບໍລິສັດຜະລິດຊິບທີ່ມີມູນຄ່າສູງເປັນ ອັນດັບ 2 ຂອງໂລກ ຮອງຈາກ Apple ແລະເປັນຜູ້ມີບົດບາດສຳຄັນໃນການ ແຂ່ງຂັນດ້ານປັນຍາປະດິດ (AI) ລະຫວ່າງສະຫະລັດກັບຈີນ.

